# ການສົ່ງເງິນຄືນຂອງທ່ານ ແລະ ການຍັງມີເງື່ອນໄຂໄດ້ຮັບຢູ່ສຳລັບ Medicaid ແລະ Food Stamps ຫລັງຈາກໄດ້ຮັບມັນແລ້ວ

**ຈົ່ງອ່ານເຈັ້ຍໃບປິວທັງຫມົດໃບນີ້ຢ່າງລະມັດລະວັງ. ຢ່າສູ້ຂ້າມພາກສ່ວນໃດພາກສ່ວນນຶ່ງໄປ.**

❖ **ເປັນຫຍັງກົມ DSHS ຈຶ່ງສົ່ງເຊັກເງິນສົ່ງຄືນມາໃຫ້ຂ້ອຍ?** ທ່ານອາດຈະມີເງື່ອນໄຂໄດ້ຮັບການສົ່ງເງິນຄືນຂອງເງິນທີ່ທ່ານໄດ້ຈ່າຍສຳລັບຄ່າຂອງການບໍຣິການປິ່ນປົວຂອງທ່ານຢູ່ເຮືອນ ຫລື ຢູ່ໃນສະຖາບັນ. ພວກເຮົາເອີ້ນເງິນທີ່ທ່ານຈ່າຍສຳລັບການປິ່ນປົວຂອງທ່ານວ່າແມ່ນ "ການເຂົ້າຮ່ວມ".

ພວກເຮົາໄດ້ກວດເບິ່ງສຳນວນເອກສານຂອງທ່ານຄືນ. ຜົນອອກມາແມ່ນວ່າທ່ານບໍ່ຄວນຈະຕ້ອງໄດ້ຈ່າຍການເຂົ້າຮ່ວມ. (ຖ້າຫາກວ່າທ່ານອາສັຍຢູ່ໃນສະຖາບັນ, ທ່ານຍັງຈະຕ້ອງໄດ້ຈ່າຍສຳລັບເງິນເກັບເອົາສຳລບ "ຫ້ອງ ແລະ ຄ່າອາຫານ" , ແຕ່ວ່າບໍ່ແມ່ນການເຂົ້າຮ່ວມ) .

ທ່ານບໍ່ຄວນຈະຕ້ອງໄດ້ຈ່າຍການເຂົ້າຮ່ວມຍ້ອນກົດຫມາຍ. ກົດຫມາຍອັນນີ້ໄດ້ຖືກເອີ້ນວ່າ Pickle Amendment (ການແກ້ໄຂຍັດຕິ) . ກົດຫມາຍອັນນີ້ໃຊ້ກ່ຽວກັບບາງບຸກຄົນຜູ້ທີ່ໄດ້ຮັບເງິນ SSI ຢູ່ໃນຜ່ານມາ, ແຕ່ວ່າດຽວນີ້ໄດ້ຮັບແຕ່ເງິນຊ່ວຍເຫລືອຄວາມປອດພັຍຂອງສັງຄົມເທົ່ານັ້ນ. SSI ແມ່ນຊື່ຫຍໍ້ສຳລັບຣາຍໄດ້ຂອງຄວາມປອດພັຍເພີ້ມເຕີມ. ພວກເຮົາຮູ້ຈັກວ່າທ່ານບໍ່ໄດ້ຮັບເງິນ SSI ໃນດຽວນີ້. ແຕ່ວ່າ, ທ່ານໄດ້ຮັບເງິນ SSI ຢູ່ໃນຜ່ານມາ. ຍ້ອນວ່າທ່ານໄດ້ຮັບເງິນ SSI ຢູ່ໃນຜ່ານມາ, ແຕ່ວ່າບໍ່ໄດ້ຮັບອີກແລ້ວ, ທ່ານບໍ່ຄວນຈະຕ້ອງໄດ້ຈ່າຍຄ່າຂອງການເຂົ້າຮ່ວມ. ພວກເຮົາໄດ້ແປງຄວາມຜິດຂອງພວກເຮົາ. ທ່ານຈະບໍ່ຕ້ອງໄດ້ຈ່າຍຄ່າຂອງການເຂົ້າຮ່ວມດຽວນີ້.

❖ **ຂ້ອຍຈະຕ້ອງໄດ້ເຮັດແນວໃດແນວນຶ່ງບໍ່ເພື່ອຈະໄດ້ຮັບເງິນສົ່ງຄືນ?**

ແມ່ນແລ້ວ. ຈົ່ງເບິ່ງເອກສານທີ່ຖືກລັດມານຳໃບແຈ້ງການໃບນີ້. ມັນຈະບອກຈຳນວນເງິນທີ່ພວກເຮົາຄິດວ່າທ່ານໄດ້ຈ່າຍໃນການເຂົ້າຮ່ວມ. ອັນນີ້ແມ່ນຈຳນວນເງິນທີ່ທ່ານບໍ່ຄວນຈະຕ້ອງໄດ້ຈ່າຍ. ຈົ່ງກວດເບິ່ງວ່າຈຳນວນເງິນແມ່ນຖືກຕ້ອງ ຫລື ບໍ່. ຖ້າຫາກວ່າມັນຖືກຕ້ອງແລ້ວ, ເຊັນຊື່ໃສ່ເອກສານ. ເຮັດໂກປີອັດສຳເນົາໄວ້ໃຫ້ເປັນບັນທຶກຂອງທ່ານ. ສົ່ງເອກສານກັບຄືນມາໃສ່ໃນຊອງເປົ່າທີ່ຖືກເອົາໃຫ້. ຖ້າຫາກວ່າມັນບໍ່ຖືກຕ້ອງ, ຈົ່ງຕິດຕໍ່ຫາພວກເຮົາໄດ້ທີ່:

❖ **ແມ່ນຫຍັງຈະເກີດຂຶ້ນໃນຕໍ່ມາ?**

ທ່ານຄວນຈະໄດ້ຮັບເຊັກເງິນສົ່ງຄືນຂອງທ່ານພາຍໃນ 90 ວັນ.

❖ **ເງິນສົ່ງຄືນອັນນີ້ຈະເປັນອັນຕະຣາຍຕໍ່ເງິນຊ່ວຍເຫລືອຂອງຂ້າພະເຈົ້າບໍ່?**

ບາງທີ. ທ່ານຕ້ອງໄດ້ລະມັດລະວັງນຳສິ່ງທີ່ທ່ານເຮັດນຳເງິນໃນຣະຫວ່າງ **ເກົ້າເດືອນ** ຫລັງຈາກທີ່ທ່ານໄດ້ຮັບເງິນ. ມັນມີສິ່ງສຳຄັນສາມຢ່າງທີ່ທ່ານຈະຕ້ອງໄດ້ຮູ້ຈັກ.

- ທ່ານບໍ່ສາມາດມີຫລາຍເກີນກວ່າ $2,000 ເປັນຊັບສິນທີ່ຍົກເວັ້ນບໍ່ໄດ້. ຊັບສິນທີ່ຍົກເວັ້ນບໍ່ໄດ້ທົ່ວໄປຫລາຍທີ່ສຸດແມ່ນເງິນຢູ່ໃນບັນຊີເຊັກກິງ ຫລື ເຊັວວິງ.
- **<u>ແຕ່ວ່າ</u>**, ເງິນສົ່ງຄືນຂອງທ່ານ **<u>ຈະບໍ່ຄິດໄລ່ໃສ່</u>** ຂອບເຂດຂອງຊັບສິນທີ່ຍົກເວັ້ນບໍ່ໄດ້ $2,000 ສຳລັບ **<u>ເກົ້າເດືອນ</u>** ທຳອິດທີ່ທ່ານໄດ້ຮັບເງິນ. ທ່ານມີເວລາພັກ **<u>ເກົ້າເດືອນ</u>** ຈາກຂອບເຂດຂອງຊັບສິນທີ່ຍົກເວັ້ນບໍ່ໄດ້ $2,000. ຕົວຢ່າງວ່າ: ຖ້າຫາກວ່າທ່ານໄດ້ຮັບເງິນສົ່ງຄືນຂອງທ່ານຢູ່ໃນເດືອນແຈນຍູຣີ, ເວລາພັກໄວ້ກ່ອນຈະແລ່ນໄປ

ເຖິງທ້າຍຂອງເດືອນເຊັບເທັມເບີ. ຫລັງຈາກເກົ້າເດືອນໄດ້ຫມົດໄປແລ້ວ, ຊັບສິນທີ່ຍົກເວັ້ນບໍ່ໄດ້ຂອງທ່ານ, ລວມທັງເງິນພາສີຣາຍໄດ້ສິ່ງຄືນ, ຕ້ອງແມ່ນ **ຕໍ່າກວ່າ** ຂອບເຂດ $2000. ເພື່ອຈະຍັງຢູ່ນໍາ Medicaid, ທ່ານຍັງຈະຕ້ອງໄດ້ສະແດງໃຫ້ພະນັກງານການເງິນຂອງທ່ານເຫັນຊັບສິນຂອງທ່ານໃນວັນທີທໍາອິດຂອງເດືອນທີສິບຫລັງຈາກທີ່ທ່ານໄດ້ຮັບເງິນສິ່ງຄືນ. ຖ້າຫາກວ່າເງິນສິ່ງຄືນຂອງທ່ານມາຮອດໃນເດືອນແຈນຢູຣີ, ທ່ານຈະຕ້ອງໄດ້ສະແດງໃຫ້ເຫັນວ່າຊັບສິນຂອງທ່ານມີຢູ່ເທົ່າໃດໃນເດືອນອົກໂຕເບີ 1 ໃຫ້ພະນັກງານການເງິນຂອງທ່ານ. ຖ້າຫາກວ່າຊັບສິນທີ່ຍົກເວັ້ນບໍ່ໄດ້ຂອງທ່ານຫລາຍກວ່າ $2000 ໃນວັນທໍາອິດຂອງເດືອນທີສິບ, **ທ່ານຈະສູນເສັຽ Medicaid ແລະ ການບໍຣິການປິ່ນປົວຣະຍະຍາວຂອງທ່ານ.** ທ່ານຍັງຈະບໍ່ມີເງື່ອນໄຂໄດ້ຮັບຢູ່ຈົນກວ່າຮອດເດືອນ **ຫລັງຈາກ** ທີ່ຊັບສິນທີ່ຍົກເວັ້ນບໍ່ໄດ້ຂອງທ່ານລົງຕໍ່າກວ່າ $2000.

  - ຖ້າຫາກວ່າທ່ານມີຄໍາຖາມ **ແນວໃດ** ກ່ຽວກັບເງິນສິ່ງຄືນຂອງທ່ານ, ຈົ່ງໂທຫາພະນັກງານການເງິນຂອງທ່ານ.ຈົ່ງສະຫລາດ. ສອບຖາມນໍາພະນັກງານການເງິນຂອງທ່ານກ່ອນ.

❖ **ຂ້ອຍໄດ້ຮັບ Food Stamps (Basic Food). ເງິນສິ່ງຄືນຈະຫມາຍຄວາມວ່າຂ້ອຍຈະໄດ້ Food Stamps ຫນ້ອຍລົງບໍ່?**

ບໍ່. ເງິນສິ່ງຄືນຈະບໍ່ສະທ້ອນເຖິງ Food Stamps ຂອງທ່ານ.ທ່ານບໍ່ຕ້ອງໄດ້ບອກພາກສ່ວນໃດຂອງກົມ DSHS ວ່າທ່ານໄດ້ຮັບເງິນສິ່ງຄືນ.

❖ **ຂ້ອຍສາມາດເຮັດຫຍັງໄດ້ແດ່ນໍາເງິນສິ່ງຄືນຂອງຂ້ອຍ?**

- ທ່ານສາມາດໃຊ້ຈ່າຍເງິນໄດ້ເກືອບຫມົດທຸກໆທາງທີ່ທ່ານຕ້ອງການ. ມັນມີການຍົກເວັ້ນຢູ່. ພວກເຮົາບອກທ່ານກ່ຽວກັບການຍົກເວັ້ນຢູ່ຂ້າງລຸ່ມນີ້. ຖ້າຫາກວ່າທ່ານມີຄໍາຖາມ, ຈົ່ງໂທຫາພະນັກງານການເງິນຂອງທ່ານກ່ອນ.
- ເກັບຮັກສາໄວ້ບັນທຶກ ແລະ ໃບຮັບວ່າທ່ານໃຊ້ເງິນສິ່ງຄືນຂອງທ່ານແນວໃດ. ພວກເຮົາຈະຂໍໃຫ້ທ່ານສະແດງໃຫ້ພວກເຮົາເຫັນວ່າທ່ານໃຊ້ຈ່າຍເງິນແນວໃດ.
- ທ່ານສາມາດ:
  - ຈ່າຍໃບບິນຂອງທ່ານ.
  - ໃຊ້ຈ່າຍເງິນພິເສດໃຫ້ຕົວທ່ານເອງ. ທ່ານສາມາດຊື້ເອົາເຄື່ອງເຮືອນ ແລະ ເຄື່ອງນຸ່ງຮົ່ມ. ເຄື່ອງເຮືອນລວມເອົາເຟີນີເຈີ, ເຄື່ອງຈັກໃຊ້ໃນເຮືອນ, ແລະ ທີວີ.
  - ສ້ອມແປງເຮືອນຂອງທ່ານ ຫລື ຣົດຂອງທ່ານ.
  - ເອົາເງິນໃຫ້ໄປສ່ວນນຶ່ງ ຫລື ທັງຫມົດ. ທ່ານສາມາດເອົາໃຫ້ໄປເທົ່ານັ້ນ **ໃນຣະຫວ່າງເກົ້າເດືອນທໍາອິດທີ່ທ່ານໄດ້ຮັບເງິນ.**
  - ທ່ານຈະເສັຽເງື່ອນໄຂໄດ້ຮັບ Medicaid ໄປຖ້າຫາກວ່າທ່ານເອົາເງິນອັນນີ້ໃຫ້ໄປຫລັງຈາກ 9 ເດືອນ. ຢ່າສູ່ເອົາເງິນໃຫ້ໄປຈັກດອນ **ຫລັງຈາກເກົ້າ** ເດືອນໄດ້ຜ່ານໄປແລ້ວນອກຈາກວ່າທ່ານໄດ້ສອບຖາມນໍາທະນາຍຄວາມກ່ອນແລ້ວ.
  - ຖ້າຫາກວ່າທ່ານບໍ່ໄດ້ເຮັດການຈັດຕຽມການຝັງສົບ/ການຈູດສົບ ແລະ ການສິ່ງສະການໄວ້ເທື່ອ, ທ່ານສາມາດໃຊ້ເງິນເພື່ອຈະຈ່າຍສໍາລັບຄ່າຂອງມັນລ່ວງຫນ້າ. ຈົ່ງບອກຮ້ານສິ່ງສະການວ່າທ່ານຕ້ອງການເງິນສົມເຊື່ອ **Medicaid-qualifying** ທີ່ຍົກເລີກບໍ່ໄດ້ ຫລື ແຜນການຝັງສົບ ຫລື ສິ່ງສະການທີ່ຈ່າຍກ່ອນລ່ວງຫນ້າ.

ອັນນີ້ຫມາຍຄວາມວ່າເມື່ອທ່ານຈ່າຍເງິນໃຫ້ຮ້ານສິ່ງສະການແລ້ວ, ທ່ານບໍ່ສາມາດຂໍເອົາເງິນຄືນໄດ້. DSHS ຍັງອະນຸຍາດໃຫ້ທ່ານມີເງິນເຖິງ **$1500** ອີກຄືກັນຢູ່ໃນບັນຊີທະນາຄານຕ່າງຫາກ. ບັນຊີອັນນີ້ຕ້ອງຖືກແຍກໄວ້ຕ່າງຫາກໂດຍສະເພາະເພື່ອຈະຈ່າຍສຳລັບຄ່າສິ່ງສະການ ແລະ ການຝັງສົບ ຫລື ການເຜົາສົບ. ເງິນອັນນີ້ບໍ່ຖືກໄລ່ໃສ່ຂອບເຂດຊັບສິນ **$2000** ທີ່ທ່ານໄດ້ຮັບອະນຸມັດ.

- o ຖ້າຫາກວ່າທ່ານແຕ່ງງານ, ທ່ານສາມາດເອົາເງິນໃຫ້ຄູ່ຜົວເມັຽຂອງທ່ານໄດ້. <u>**ຄຳເຕືອນ:**</u> ຄູ່ຜົວເມັຽຂອງທ່ານໄດ້ຮັບ Medicaid ຢູ່ບໍ່? ຖ້າແມ່ນ, ເຂົາເຈົ້າມີຂອບເຂດ **$2,000** ຄືກັນກັບທ່ານ. ທ່ານສາມາດເຮັດໃຫ້ຄູ່ຜົວເມັຽຂອງທ່ານບໍ່ມີເງື່ອນໄຂໄດ້ຮັບ Medicaid ຖ້າຫາກວ່າທ່ານເອົາເງິນສິ່ງຄືນຂອງທ່ານໃຫ້ເຂົາເຈົ້າ. ຈົ່ງສະຫລາດ. ໂທຫາພະນັກງານການເງິນຂອງທ່ານກ່ອນຖ້າຫາກວ່າທ່ານມີຄຳຖາມ.
- o **ຄຳເຕືອນ:** ສິ່ງຂອງບາງຢ່າງທີ່ທ່ານສາມາດຊື້ເອົາໄດ້ອາດຈະກໍ່ໃຫ້ເກີດບັນຫາ. ຕົວຢ່າງວ່າ, ທ່ານສາມາດມີຣົດຄັນນຶ່ງໄດ້. ຖ້າຫາກວ່າທ່ານຊື້ເອົາອີກຄັນນຶ່ງ ຫລື ຣົດ **RV,** ມູນຄ່າຂອງຣົດຄັນທີສອງຈະຖືກໄລ່ໃສ່ຂອບເຂດຊັບສິນຂອງທ່ານ. ທ່ານສາມາດຊື້ເອົາຣົດໃຫມ່ແທນຣົດປັດຈຸບັນຂອງທ່ານດ້ວຍເງິນສິ່ງຄືນ. ຈົ່ງສະຫລາດ. ໂທຫາພະນັກງານການເງິນຂອງທ່ານກ່ອນຖ້າຫາກວ່າທ່ານມີຄຳຖາມ.

❖ **ຂ້ອຍສາມາດເອົາເງິນຂອງຂ້ອຍໃສ່ໄວ້ໃນບັນຊີສິນເຊື່ອບໍ່?**

ກົດລະບຽບກ່ຽວກັບບັນຊີສິນເຊື່ອແມ່ນສັບສົນຫລາຍ. ກ່ອນອື່ນ, ຖ້າຫາກວ່າທ່ານມີອາຍຸກາຍເກີນ 65 ປີ, ເງິນທຸກໆຢ່າງທີ່ທ່ານເອົາໃສ່ໃນບັນຊີສິນເຊື່ອຈະຖືກຄິດໄລ່ໃສ່ສຳລັບ Medicaid. ທ່ານສາມາດຖືກຕັດສິດຈາກ Medicaid ຖ້າຫາກວ່າທ່ານເອົາເງິນສິ່ງຄືນຂອງທ່ານໃສ່ໃນບັນຊີສິນເຊື່ອ.

ຖ້າຫາກວ່າທ່ານມີອາຍຸຕ່ຳກວ່າ 65 ປີ, ທ່ານອາດຈະສາມາດກໍ່ຕັ້ງບັນຊີສິນເຊື່ອບ່ອນທີ່ເງິນຢູ່ໃນບັນຊີສິນເຊື່ອບໍ່ຖືກຄິດໄລ່ໃສ່ສຳລັບ Medicaid. ຄ່າຂອງການຕັ້ງຂຶ້ນ ແລະ ການຮັກສາບັນຊີສິນເຊື່ອຂອງຄົນໃດຄົນນຶ່ງໄວ້ອາດຈະສູງ. ບຸກຄົນອາຍຸຕ່ຳກວ່າ 65 ປີສາມາດເອົາເງິນສິ່ງຄືນຂອງເຂົາເຈົ້າໃສ່ໃນບັນຊີສິນເຊື່ອ "ໂຮມນຳກັນ" ທີ່ຖືກແລ່ນໂດຍອົງການບໍ່ຫວັງຜົນກຳໄຣ. ທ່ານຄວນຈະຂໍເອົາຄຳແນະນຳຈາກທະນາຍຄວາມຜູ້ທີ່ມີປະສົບປະການໃນເຣື່ອງເງື່ອນໄຂຮັບການຊ່ວຍເຫລືອຂອງ Medicaid ເພື່ອຈະຊ່ວຍເຫລືອທ່ານນຳຄຳຖາມກ່ຽວກັບບັນຊີສິນເຊື່ອ.

❖ **ຂ້ອຍສາມາດໄປໃສໄດ້ເພື່ອຮາຍລະອຽດເພີ້ມເຕີມ?**

ຖ້າຫາກວ່າທ່ານຕ້ອງການຄຳແນະນຳທາງກົດຫມາຍທ່ານສາມາດໂທຫາສາຍດ່ວນ CLEAR ໄດ້ທີ່: **1-888-201-1014** ຫລື ທາງອິນເຕີແນດໄດ້ທີ່: [http://nwjustice.org/get-legal-help](http://nwjustice.org/get-legal-help).

ສຳລັບຄວາມຫ່ວງໄຍນຳການສະແວງຫາຜົນກຳໄຣທາງການເງິນ, ກະຣຸນາຕິດຕໍ່ຫາພະແນກ Adult Protective Services ໄດ້ທີ່ 1-866-ENDHARM (1-866-363-4276).

ທ່ານຍັງສາມາດຕິດຕໍ່ຫາພະນັກງານການເງິນຂອງກົມ DSHS ຂອງທ່ານຖ້າມີຄຳຖາມ.